ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 2225/ປທສ
ນະຄອນຫຼວງວຽງຈັນ, ວັນທີ 15 ສິງຫາ 2018

# ຄໍາແນະນໍາ
# ກ່ຽວກັບການອະນຸຍາດດໍາເນີນທຸລະກິດດ້ານໂທລະຄົມມະນາຄົມ

- ອີງຕາມ ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ (ສະບັບປັບປຸງ) ສະບັບເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີສະບັບເລກທີ 22/ນຍ, ລົງວັນທີ 16 ມັງກອນ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

## ລັດຖະມົນຕີ ອອກຄໍາແນະນໍາ:

## I. ຈຸດປະສົງ

ຄໍາແນະນໍາສະບັບນີ້ ວາງອອກເພື່ອຜັນຂະຫຍາຍເນື້ອໃນຂອງກົດໝາຍວ່າດ້ວຍການໂທລະຄົມມະນາຄົມກ່ຽວກັບການອອກໃບອະນຸຍາດດໍາເນີນທຸລະກິດດ້ານໂທລະຄົມມະນາຄົມໃຫ້ເປັນອັນລະອຽດ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມເປັນເອກະພາບ, ຍຸຕິທໍາ ແນ່ໃສ່ຮັບປະກັນການດໍາເນີນທຸລະກິດດ້ານໂທລະຄົມມະນາຄົມ ຂອງຜູ້ໃຫ້ບໍລິການມີປະສິດທິພາບ, ປະສິດທິຜົນ ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ.

## II. ປະເພດການປະກອບກິດຈະການໂທລະຄົມມະນາຄົມ

### 1. ການປະກອບກິດຈະການໂທລະຄົມມະນາຄົມປະເພດທີ່ ໜຶ່ງ:

ແມ່ນການໃຫ້ບໍລິການເຄືອຂ່າຍ ແລະ ສະໜອງບໍລິການໂທລະຄົມມະນາຄົມ ຊຶ່ງມີລາຍລະອຽດ ດັ່ງນີ້:

1) ການໃຫ້ບໍລິການເຄືອຂ່າຍປະກອບມີກິດຈະການ ດັ່ງນີ້:
   - ການໃຫ້ບໍລິການເຄືອຂ່າຍ;
   - ລະບົບເຄືອຂ່າຍຮັບສົ່ງສັນຍານໂທລະສັບແບບມີສາຍ ແລະ ບໍ່ມີສາຍ;
   - ລະບົບສາຍສົ່ງ.
2) ສະໜອງບໍລິການໂທລະຄົມມະນາຄົມປະກອບມີກິດຈະການ ດັ່ງນີ້:
   - ສະຖານີຮັບສົ່ງສັນຍານດາວທຽມພາກພື້ນດິນ;
   - ໂທລະສັບແບບມີສາຍ ແລະ ບໍ່ມີສາຍ;
   - ການໃຫ້ບໍລິການສາຍເຊົ່າ;
   - ເຊື່ອມຕໍ່ເຄືອຂ່າຍໂທລະສັບຕ່າງປະເທດ;

ຫຼ້.

- ເຊື່ອມຕໍ່ເຄືອຂ່າຍໂທລະສັບພາຍໃນປະເທດ;
- ເຊື່ອມຕໍ່ເຄືອຂ່າຍອິນເຕີເນັດຕ່າງປະເທດ;
- ເຊື່ອມຕໍ່ເຄືອຂ່າຍອິນເຕີເນັດພາຍໃນປະເທດ;
- ທາງຜ່ານສໍາລັບອິນເຕີເນັດ.

2. **ການປະກອບກິດຈະການໂທລະຄົມມະນາຄົມປະເພດທີ່ ສອງ:**

ແມ່ນການສະໜອງບໍລິການໂທລະຄົມມະນາຄົມສໍາລັບຜູ້ທີ່ບໍ່ມີເຄືອຂ່າຍເປັນຂອງຕົນເອງ ຊຶ່ງມີລາຍລະອຽດ ດັ່ງນີ້:

- ອິນເຕີເນັດ: ການສະໜອງການໃຫ້ບໍລິການອິນເຕີເນັດ;
- ລະຫັດອິນເຕີເນັດ: ການໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ;
- ການເຊື່ອມຕໍ່ອິນເຕີເນັດ: ການສະໜອງການເຊື່ອມຕໍ່ອິນເຕີເນັດ;
- ການບໍລິການເສີມ: ການບໍລິການທີ່ບໍ່ນອນຢູ່ໃນການບໍລິການຫຼັກທີ່ສ້າງມູນຄ່າເພີ່ມ.

3. **ການປະກອບກິດຈະການໂທລະຄົມມະນາຄົມປະເພດທີ່ ສາມ:**

ແມ່ນປະການບໍລິການໃຫ້ຄໍາປຶກສາ, ສ້ອມແປງ ແລະ ສະໜອງອຸປະກອນດ້ານໂທລະຄົມມະນາຄົມ ຊຶ່ງມີລາຍລະອຽດດັ່ງນີ້:

- ການບໍລິການທີ່ປຶກສາດ້ານໂທລະຄົມມະນາຄົມ: ທີ່ປຶກສາດ້ານກົດໝາຍ, ດ້ານເຕັກນິກ, ດ້ານເຄືອຂ່າຍ;
- ຕິດຕັ້ງ ແລະ ສ້ອມແປງອຸປະກອນໂທລະຄົມມະນາຄົມ;
- ສົ່ງອອກ ແລະ ນໍາເຂົ້າອຸປະກອນໂທລະຄົມມະນາຄົມ;
- ຜະລິດ ແລະ ຈໍາໜ່າຍອຸປະກອນໂທລະຄົມມະນາຄົມ.

4. **ການປະກອບກິດຈະການໂທລະຄົມມະນາຄົມປະເພດທີ່ ສີ່:**

ແມ່ນການບໍລິການທີ່ມີເຄືອຂ່າຍໂທລະຄົມມະນາຄົມທີ່ໃຊ້ສະເພາະຕົນເອງເທົ່ານັ້ນ ຊຶ່ງມີລາຍລະອຽດ ດັ່ງນີ້:

- ລະບົບ ວິທະຍຸສື່ສານ (ເຄື່ອງສື່ສານໂຟນີ);
- ລະບົບ ວິທະຍຸທຣັງ.

## III. ເງື່ອນໄຂການອອກໃບອະນຸຍາດ, ການປະກອບເອກະສານ ແລະ ການຕໍ່ອາຍຸໃບອະນຸຍາດ

1. ເງື່ອນໄຂການອອກໃບອະນຸຍາດ.

ການອອກໃບອະນຸຍາດຕ້ອງມີເງື່ອນໄຂດັ່ງນີ້:

1. ມີຖານະທາງດ້ານການເງິນທີ່ໝັ້ນຄົງ;
2. ມີບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ ແລະ ມີປະສົບການພໍສົມຄວນທີ່ສົມຄູ່ກັບວຽກງານ;
3. ມີສໍານັກງານ, ພາຫະນະ ແລະ ອຸປະກອນຮັບໃຊ້ວຽກງານດ້ານຕ່າງໆຢ່າງພຽງພໍ ແລະ ເໝາະສົມກັບຂະໜາດຂອງກິດຈະການ;
4. ຊໍາລະຄ່າທໍານຽມ ແລະ ຄ່າບໍລິການ ຖືກຕ້ອງ ແລະ ຄົບຖ້ວນ;
5. ຕ້ອງປະກອບເອກະສານທີ່ກໍານົດໄວ້ໃຫ້ຄົບຖ້ວນ.

2. ການປະກອບເອກະສານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ມີຈຸດປະສົງຂໍອະນຸຍາດປະກອບກິດຈະການດ້ານໂທລະຄົມມະນາຄົມຕ້ອງປະກອບເອກະສານ ດັ່ງນີ້:

2.1. **ເອກະສານປະກອບການຂໍອະນຸຍາດປະກອບກິດຈະການດ້ານໂທລະຄົມມະນາຄົມ ປະເພດ ໜຶ່ງ, ສອງ ແລະ ສາມ ມີດັ່ງນີ້:**

1). ສັນຍາ ແລະ ຂໍ້ຜູກພັນຕ່າງໆ (ຖ້າມີການຮ່ວມທຶນກັນ);

2). ຊີວະປະຫວັດຫຍໍ້ຂອງຜູ້ສ້າງຕັ້ງ;

3). ໃບຢັ້ງຢືນຖານະການເງິນ ແລະ ປະສົບການຂອງຜູ້ສ້າງຕັ້ງ;

4). ເອກະສານຢັ້ງຢືນກ່ຽວກັບການເປັນນິຕິບຸກຄົນຢູ່ຕ່າງປະເທດ (ຖ້າມີ);

5). ສຳເນົາບັດປະຈຳຕົວ (ບຸກຄົນພາຍໃນ) ແລະ ສຳເນົາໜັງສືຜ່ານແດນ (ບຸກຄົນຕ່າງປະເທດ);

6). ບົດວິພາກເສດຖະກິດ;

7). ແຜນຜັງລະບົບເຕັກນິກ;

8). ລະບຽບການຂອງວິສາຫະກິດ;

9). ເອກກະສານອື່ນທີ່ເຫັນວ່າຈຳເປັນ.

2.2. **ເອກະສານປະກອບການຂໍອະນຸຍາດປະກອບກອບກິດຈະການດ້ານໂທລະຄົມມະນາຄົມ ປະເພດ ສີ່ ມີດັ່ງນີ້:**

1). ຄຳຮ້ອງຂໍຕາມແບບຟອມທີ່ນຳກົດໃຫ້;

2). ສັນຍາ ແລະ ຂໍ້ຜູກພັນຕ່າງໆ (ຖ້າມີການຮ່ວມທຶນກັນ);

3). ແຜນຜັງລະບົບເຕັກນິກ;ຊີວະປະຫວັດຫຍໍ້ຂອງຜູ້ສ້າງຕັ້ງ;

4). ເອກະສານຢັ້ງຢືນກ່ຽວກັບການເປັນນິຕິບຸກຄົນ;

5). ສຳເນົາບັດປະຈຳຕົວ (ບຸກຄົນພາຍໃນ) ແລະ ສຳເນົາໜັງສືຜ່ານແດນ (ບຸກຄົນຕ່າງປະເທດ);

6). ອກກະສານທີ່ກ່ຽວຂ້ອງກັບການອະນຸຍາດ;

7). ເອກກະສານອື່ນທີ່ເຫັນວ່າຈຳເປັນ.

3. **ການຕໍ່ອາຍຸໃບອະນຸຍາດ**

ການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມຄວນປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີ;
2. ໜັງສືອະນຸຍາດດຳເນີນທຸລະກິດ;
3. ສຳເນົາໜັງສືທະບຽນວິສາຫະກິດ;
4. ສຳເນົາໜັງສືທະບຽນອາກອນ;
5. ສຳເນົາບັດປະຈຳຕົວ (ຄົນພາຍໃນ) ຫຼື ສຳເນົາໜັງສືຜ່ານແດນ (ຄົນຕ່າງປະເທດ).

ສຳລັບການສະເໜີຂໍຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດປະຈຳປີ ແມ່ນໃຫ້ຕໍ່ກ່ອນໃບອະນຸຍາດໝົດກຳນົດ ສາມສິບ ວັນລັດຖະການ, ຖ້າບໍ່ສາມາດສະເໜີຂໍຕໍ່ອາຍຸໃບອະນຸຍາດທັນກຳນົດ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຫລື ພະແນກ ໄປສະນີ, ໂທລະ

ຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນ ທີ່ເປັນຜູ້ອອກໃບອະນຸຍາດໃຫ້, ຖ້າບໍ່ແຈ້ງຖືວ່າມີຈຸດປະສົງທີ່ຈະຢຸດເຊົາ ກິດຈະການ, ພາກສ່ວນກ່ຽວຂ້ອງທີ່ເປັນຜູ້ອອກອະນຸຍາດຈະດຳເນີນການຍຸບເລີກໃບອະນຸຍາດ.

## IV. ຂໍ້ຫ້າມ ແລະ ມາດຕະການປັບໃໝ

ຂໍ້ຫ້າມ ແລະ ມາດຕະການປັບໃໝ ກ່ຽວກັບ ການດຳເນີນທຸລະກິດດ້ານໂທລະຄົມມະນາຄົມ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການໂທລະຄົມມະນາຄົມ ສະບັບປັບປຸງ ເລກທີ 09/ສພຊ, ລົງວັນທີ 21/12/2011.

## V. ການຈັດຕັ້ງປະຕິບັດ

ມອບໃຫ້ ອົງການດັດສົມໂທລະຄົມມະນາຄົມ ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ຈັດຕັ້ງການໂຄສະນາ, ເຜີຍແຜ່, ແນະນຳ ແລະ ປະຕິບັດຄຳແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ, ບຸກຄົນ, ນິຕິບຸກຄົນ ພາຍໃນ ສປປ ລາວ ຈົ່ງຮັບຮູ້ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ຖືກຕ້ອງ.

## VI. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ຈັດຕັ້ງປະຕິບັດພາຍຫຼັງທີ່ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ລັດຖະມົນຕີ

ປອ. ທັນສະໄໝ ກົມມະສິດ